ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ: 961 /ຖວທ

ນະຄອນຫລວງວຽງຈັນ, ວັນທີ 20/9/2019

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງ ອຸປະກອນຮັບສັນຍານ ວິທະຍຸ-ໂທລະພາບຜ່ານດາວທຽມ

- ອີງຕາມ ກົດໝາຍ ວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ກົດໝາຍ ວ່າດ້ວຍສື່ມວນຊົນ ( ສະບັບປັບປຸງ) ສະບັບເລກທີ 01/ສພຊ, ລົງວັນທີ 4 ພະຈິກ 2016;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 95/ລບ, ລົງວັນທີ 09/03/2017;
- ອີງຕາມ ແຈ້ງການ ຂອງ ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1989/ຫສນຍ.ກຄສ, ລົງວັນທີ 14 ທັນວາ 2017.

## ລັດຖະມົນຕີ ອອກຂໍ້ຕົກລົງ:

### ໝວດທີ 1
### ຫຼັກການທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງຫົວໜ່ວຍທຸລະກິດ, ບໍລິສັດ, ຫ້າງຮ້ານ ແລະ ຕົວແທນ ທີ່ດຳເນີນທຸລະກິດກ່ຽວກັບ ການນຳເຂົ້າ, ຈຳໜ່າຍ ແລະ ບໍລິການ ອຸປະກອນຮັບສັນຍານ ວິທະຍຸ-ໂທລະພາບ ຜ່ານດາວທຽມ ຢູ່ໃນ ສປປ ລາວ ໃຫ້ເປັນລະບົບ, ມີຄວາມທັນສະໄໝ, ປອດໄພ ແລະ ຍຸຕິທຳ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ຮັບປະກັນການປະຕິບັດພັນທະຕໍ່ລັດຢ່າງ ຖືກຕ້ອງຄົບຖ້ວນ, ປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງ ຜູ້ຊົມໃຊ້ໃນການຮັບຂໍ້ມູນຂ່າວສານ ຂອງພາຍໃນ, ພາກພື້ນ ແລະ ສາກົນ ຢ່າງມີປະສິດທິພາບ, ປະກອບສ່ວນເຂົ້າໃນ ການພັດທະນາເສດຖະກິດ-ສັງຄົມ ຂອງ ປະເທດ.

**ມາດຕາ 2  ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ**

ອຸປະກອນຮັບສັນຍານ ວິທະຍຸ-ໂທລະພາບຜ່ານດາວທຽມແມ່ນເຕັກໂນໂລຊີການສື່ສານໂດຍນຳໃຊ້ຄື້ນຄວາມຖີ່ເພື່ອຮັບສັນຍານລາຍການວິທະຍຸກະຈາຍສຽງ, ໂທລະພາບ, ຂໍ້ມູນຂ່າວສານລະຫວ່າງສະຖານີພາກພື້ນດິນ ແລະ ໜ່ວຍດາວທຽມ.

ອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມຊຸດໜຶ່ງປະກອບດ້ວຍພາກສ່ວນສຳຄັນຄື:

1. ຫົວດູດສັນຍານ (Low Noise Block-LNB )
2. ຈານຮັບສັນຍານ (Antenna disk)
3. ກ່ອງຮັບສັນຍານຜ່ານດາວທຽມ ( set top box-STB )
4. ສາຍເຊື່ອມຕໍ່ສັນຍານ ( Cable )

**ມາດຕາ 3  ຫຼັກການກ່ຽວກັບການນຳໃຊ້ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ**

ຂໍ້ຕົກລົງສະບັບນີ້ ໄດ້ກຳນົດຫຼັກການ ການນຳໃຊ້ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ ດັ່ງລຸ່ມນີ້:

1. ຮັບປະກັນຄວາມຖືກຕ້ອງ ສອດຄ່ອງກັບກົດໝາຍວ່າດ້ວຍສື່ມວນຊົນ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

2. ຮັບປະກັນ ການຄຸ້ມຄອງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ຕາມການແບ່ງຂັ້ນຄຸ້ມຄອງຂອງຂະແໜງການ ຖວທ;

3. ຮັບປະກັນຄຸນນະພາບ, ຖືກຕາມມາດຕະຖານສັນຍານພາບ ແລະ ສຽງຕາມທີ່ອົງການກ່ຽວຂ້ອງໄດ້ກຳນົດໄວ້;

4. ປົກປ້ອງສິດທິຜົນປະໂຫຍດ ຂອງຜູ້ໃຫ້ບໍລິການ ແລະ ຜູ້ຊົມໃຊ້;

5. ຮັບປະກັນຄວາມປອດໄພທາງດ້ານເນື້ອໃນ, ຂໍ້ມູນຂ່າວສານ ຕໍ່ຜູ້ຊົມໃຊ້.

**ມາດຕາ 4  ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວທຸລະກິດນຳເຂົ້າ, ຈຳໜ່າຍ ແລະ ບໍລິການ ອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມ ຢູ່ ດິນແດນ ຂອງ ສປປ ລາວ.

## ໝວດທີ 2
## ການອະນຸຍາດເປັນຕົວແທນນຳເຂົ້າ
## ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ

**ມາດຕາ 5  ການອະນຸຍາດເປັນຕົວແທນນຳເຂົ້າ**

ຜູ້ຈະເປັນຕົວແທນນຳເຂົ້າ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ ຕ້ອງໄດ້ປະກອບເອກະສານ ຂໍອະນຸຍາດ ການຕົວແທນນຳເຂົ້າ ຂອງຕົນ ນຳ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຊຶ່ງມີເອກະສານ ດັ່ງລຸ່ມນີ້:

1. ໃບສະເໜີ ຂໍເປັນຕົວແທນ ນຳເຂົ້າ, ຈຳໜ່າຍ ແລະ ບໍລິການ;
2. ໃບທະບຽນວິສາຫະກິດ ອອກໂດຍກະຊວງ ອຸດສາຫະກຳ ແລະ ການຄ້າ;
3. ໃບຢັ້ງຢືນການແຕ່ງຕັ້ງເປັນຕົວແທນຈຳໜ່າຍຈາກເຈົ້າ ຂອງຜະລິດຕະພັນນັ້ນໆ;

4. ໃບຢັ້ງຢືນມາດຕະຖານດ້ານເຕັກນິກຈາກກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

5. ໃບບັນຊີຊ່ອງລາຍການ ວິທະຍຸ ແລະ ໂທລະພາບ ຜ່ານດາວທຽມ;

ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈະພິຈາລະນາອອກໃບອະນຸຍາດເປັນຕົວແທນໃຫ້ຜູ້ປະກອບກິດຈະການດັ່ງກ່າວ ໃນໄລຍະເວລາ ສິບຫ້າວັນ ຕາມວັນລັດຖະການ.

**ມາດຕາ 6 ສິດ, ໜ້າທີ່ ແລະ ພັນທະຂອງຜູ້ເປັນຕົວແທນນຳເຂົ້າ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບ ຜ່ານດາວທຽມ**

ຜູ້ເປັນຕົວແທນນຳເຂົ້າ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບ ຜ່ານດາວທຽມມີສິດ, ໜ້າທີ່ ແລະ ພັນທະດັ່ງນີ້:

1. ນຳເຂົ້າອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ ຊຶ່ງອະນຸຍາດນຳເຂົ້າໂດຍ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;

2. ຈຳໜ່າຍແບບຂາຍສົ່ງ, ຂາຍຍ່ອຍ ແລະ ຕິດຕັ້ງອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມ ໃຫ້ລູກຄ້າໄດ້ ຕາມຈຳນວນທີ່ໄດ້ອະນຸຍາດ;

3. ສະຫຼຸບລາຍງານການ ນຳເຂົ້າ, ການຈຳໜ່າຍ, ການບໍລິການ ແລະ ຈຳນວນລາຍຊື່ຮ້ານຂາຍຍ່ອຍອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ ຂອງຕົນ ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ຊາບ ທຸກຄັ້ງທີ່ນຳເຂົ້າ;

4. ຕິດຕາມ ແລະ ລາຍງານ ການນຳເຂົ້າອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມທີ່ບໍ່ຖືກຕ້ອງກົດໝາຍ ແລະ ລະບຽບການສະເໜີໃຫ້ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ເພື່ອລົງກວດກາ;

5. ມີພັນທະເສຍ ຄ່າທຳນຽມ ແລະ ເສຍຄ່າບໍລິການ ຕາມລັດຖະດຳລັດ ຂອງປະທານປະເທດ.

## ໝວດທີ 3
## ການຂໍອະນຸຍາດນຳເຂົ້າ, ຈຳໜ່າຍ ແລະ ບໍລິການ ອຸປະກອນຮັບສັນຍານ ວິທະຍຸ-ໂທລະພາບຜ່ານດາວທຽມ

**ມາດຕາ 7 ການຂໍອະນຸຍາດ ນຳເຂົ້າ, ຈຳໜ່າຍ ແລະ ບໍລິການ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ**

ຜູ້ເປັນຕົວແທນນຳເຂົ້າ, ຈຳໜ່າຍ ແລະ ບໍລິການອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມທີ່ມີຈຸດປະສົງນຳອຸປະກອນດັ່ງກ່າວເຂົ້າມາໃນ ສປປ ລາວ ຕ້ອງໄດ້ຂໍອະນຸຍາດນຳເຂົ້າ ນຳ ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ.

ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ກ່ອນຈະອະນຸຍາດນຳເຂົ້າອຸປະກອນຮັບສັນຍານ ວິທະຍຸ-ໂທລະພາບ ຜ່ານດາວທຽມ ຕ້ອງ ກວດສອບ ຄວາມສອດຄ່ອງເນື້ອໃນອຸປະກອນນຳເຂົ້າຕົວຈິງ ກັບ ໃບອະນຸຍາດ ດັ່ງລຸ່ມນີ້:

1. ໃບອະນຸຍາດເປັນຕົວແທນນຳເຂົ້າ, ຈຳໜ່າຍ ແລະ ບໍລິການ ຈາກ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທຽວ.

2. ໃບຢັ້ງຢືນມາດຕະຖານດ້ານເຕັກນິກຂອງອຸປະກອນ ຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 8 ການບໍລິການ**

ຜູ້ເປັນຕົວແທນນຳເຂົ້າ, ຈຳໜ່າຍ ແລະ ບໍລິການ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ ພາຍຫຼັງມີການຈຳໜ່າຍ ຕ້ອງໃຫ້ບໍລິການ ດັ່ງນີ້:

1. ຕິດຕັ້ງ ຕາມການຕົກລົງເຫັນດີ ກັບ ລູກຄ້າໃນເຮືອນໄຊຕ່າງໆ;
2. ມີທີມງານເຕັກນິກເພື່ອຕິດຕັ້ງ ແລະ ໃຫ້ການບໍລິການຫຼັງການຂາຍ ໃຫ້ພຽງພໍ;
3. ຮັບປະກັນຄຸນນະພາບ ພາບ ແລະ ສຽງ ຊ່ອງລາຍການໂທລະພາບໃຫ້ແກ່ລູກຄ້າ.

## ໝວດທີ 4
## ການແບ່ງຄວາມຮັບຜິດຊອບຄຸ້ມຄອງ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ

**ມາດຕາ 9 ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຄົ້ນຄ້ວາ ອອກນິຕິກຳ, ອອກໃບອະນຸຍາດຢັ້ງຢືນເປັນຕົວແທນ ນຳເຂົ້າ, ຈຳໜ່າຍ ແລະ ບໍລິການ, ລົງຕິດຕາມກວດກາ ການປະຕິບັດ ກົດໝາຍ ແລະ ລະບຽບການ, ອອກແຈ້ງການຕ່າງໆ ກ່ຽວກັບການຄຸ້ມຄອງ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ.

**ມາດຕາ 10 ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ເປັນຜູ້ອະນຸຍາດນຳເຂົ້າ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມດ້ວຍການກວດກາ ໃບອະນຸຍາດການນຳເຂົ້າ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ ຕາມ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ມີສິດ ເກັບຄ່າທຳນຽມ ແລະ ບໍລິການ, ອອກແຈ້ງການກ່ຽວກັບການຄຸ້ມຄອງອຸປະກອນພາຍໃນ ແຂວງ, ນະຄອນຫຼວງ ສະຫຼຸບລາຍງານດ້ານເນື້ອໃນ, ເຕັກນິກ, ການບໍລິການ ສົ່ງໃຫ້ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນທຸກຫົກເດືອນ.

**ມາດຕາ 11 ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ເປັນຜູ້ລົງຕິດຕາມ ກວດກາການນຳເຂົ້າ ແລະ ຕິດຕັ້ງ ອຸປະກອນດັ່ງກ່າວ ແລະ ປະຕິບັດມາດຕະການທີ່ເໝາະສົມຕໍ່ຜູ້ປະກອບກິດຈະການນຳເຂົ້າອຸປະກອນ ຕາມລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 12 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດມີພຶດຕິກຳດັ່ງນີ້:

1. ດຳເນີນທຸລະກິດນຳເຂົ້າ, ຈຳໜ່າຍ ແລະ ບໍລິການ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບ ຜ່ານດາວທຽມ ໂດຍບໍ່ໄດ້ຮັບໃບອະນຸຍາດ ນຳເຂົ້າ ຈາກພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;

2. ນຳເຂົ້າ, ຜະລິດ, ນຳໃຊ້ ແລະ ຈຳໜ່າຍ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບ ຜ່ານດາວທຽມທຸກຊະນິດ ໂດຍບໍ່ໄດ້ຮັບ ອະນຸຍາດ, ກວດກາ ແລະ ບໍ່ໄດ້ຮັບການຢັ້ງຢືນມາດຖານເຕັກນິກຂອງອຸປະກອນ ຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

3. ຂັດຂວາງການປະຕິບັດງານຂອງເຈົ້າໜ້າທີ່ ໃນການກວດກາອຸປະກອນທີ່ຈະນຳເຂົ້າ ດ້ວຍວິທີຕ່າງໆ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ.

## ໝວດທີ 6
## ການກວດກາ

### ມາດຕາ 13 ເປົ້າໝາຍກວດກາ

ເປົ້າໝາຍການກວດກາ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມໄດ້ກຳນົດ ດັ່ງນີ້:

1. ຮ້ານຂາຍຍົກ, ຮ້ານຂາຍຍ່ອຍ, ຮ້ານຕິດຕັ້ງ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບ ຜ່ານດາວທຽມ;
2. ຫົວໜ່ວຍຮັບສັນຍານ ຢູ່ສຳນັກງານຫ້ອງການ ແລະ ເຮືອນປະຊາຊົນ.

### ມາດຕາ 14 ຜູ້ກວດກາ

ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫລວງ; ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ໂດຍປະສານສົມທົບ ກັບຂະແໜງການອື່ນທີ່ກ່ຽວຂ້ອງ ຈັດຕັ້ງກວດກາ ການນຳເຂົ້າ, ຈຳໜ່າຍ ແລະ ບໍລິການ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ ຕາມແຕ່ລະໄລຍະ.

### ມາດຕາ 15 ເນື້ອໃນການກວດກາ

ການກວດກາ ອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ ປະກອບດ້ວຍເນື້ອໃນການກວດກາ 4 ຢ່າງດັ່ງລຸ່ມນີ້:

1. ການນຳເຂົ້າອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ;

2. ໃບອະນຸຍາດຮັບຮອງມາດຕະຖານເຕັກນິກ ຈາກຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

3. ເນື້ອໃນ ແລະ ຮູບແບບການຈັດຊ່ອງລາຍການ;

4. ການໄດ້ຮັບໃບອະນຸຍາດຈາກເຈົ້າຂອງຊ່ອງ ຫຼື ໄດ້ຮັບສິດການກະຈາຍຕໍ່.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 16 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ, ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຜູ້ເຮັດທຸລະກິດບໍລິການອຸປະກອນຮັບສັນຍານວິທະຍຸ-ໂທລະພາບຜ່ານດາວທຽມ ທີ່ມີຜົນງານດີເດັ່ນ ແລະ ປະກອບສ່ວນເຂົ້າໃນວຽກງານຖະແຫຼງຂ່າວຢ່າງດີ ແລະ ຖືກຕ້ອງຕາມກົດໝາຍ ສປປລາວ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບນະໂຍບາຍອື່ນ.

### ມາດຕາ 17 ມາດຕະການຕໍ່ຜູ້ລະເມີດ.

ບຸກຄົນ, ນິຕິບຸກຄົນ, ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປັບໃໝ, ຖອນໃບອະນຸຍາດ ລວມທັງໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງວິໄນທາງອາຍາຕາມແຕ່ລະກໍລະນີເບົາ ຫຼື ໜັກ ໂດຍສອດຄ່ອງຕາມກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

### ມາດຕາ 18 ການຈັດຕັ້ງປະຕິບັດ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ສົມທົບກັບ ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ປະສານສົມທົບກັບຂະແໜງການອື່ນ ທີ່ກ່ຽວຂ້ອງເພື່ອພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 19 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ປ່ຽນແທນ ຂໍ້ກຳນົດວ່າດ້ວຍລະບຽບການຄຸ້ມຄອງອຸປະກອນຮັບສັນຍານລາຍການ ວິທະຍຸ ແລະ ໂທລະພາບຜ່ານດາວທຽມເລກທີ່ 752/ຖວ ລົງວັນທີ່ 30/10/2003ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ສຈ. ດຣ ບໍ່ແສງຄຳ ວົງດາລາ